## ເຄັດລັບການພັດທະນາຕົວເມືອງ

ໃນຫົວຂໍ້ນີ້ ທ່ານຈະໄດ້ພົບກັບຂໍ້ມູນຂ່າວສານ ກ່ຽວກັບ ກົດໝາຍ ແລະ ສະຖາບັນການຈັດຕັ້ງ ໃນການພັດທະນາຕົວເມືອງ ພ້ອມທັງແນວຄິດລິເລີ່ມ ຂອງ ການພັດທະນາຕົວເມືອງ.

ຫົວຂໍ້ ຂອງ ຈົດໝາຍຂ່າວສະບັບນີ້ ແມ່ນ: **ດຳລັດ ວ່າດ້ວຍ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ**

## ດຳລັດ ວ່າດ້ວຍ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ (PPP)

ດຳລັດ ວ່າດ້ວຍ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ສະບັບເລກທີ 624/ລບ ທີ່ໄດ້ຖືກຮັບຮອງ ໃນວັນທີ 21 ທັນວາ 2020 ໄດ້ກຳນົດ ຂັ້ນຕອນ ໃນການຈັດຕັ້ງປະຕິບັດໂຄງການ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ. ດຳລັດສະບັບນີ້ ມີຈຸດປະສົງແນໃສ່ ການສ້າງຄວາມເຊື່ອໝັ້ນ ແລະ ດຶງດູດການລົງທຶນ ຂອງພາກເອກະຊົນ ເຂົ້າໃນໂຄງການຂອງລັດ, ປົກປ້ອງຜົນປະໂຫຍດຂອງ ສາທາລະນະ, ສິດ ແລະ ຜົນປະ ໂຫຍດອັນຊອບທຳ ຂອງ ພາກເອກະຊົນ ແລະ ປະຊາຊົນ, ປະກອບສ່ວນເຂົ້າໃນການ ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມທິດສີຂຽວ ແລະ ຍືນຍົງ.




## ການພັດທະນາຕົວເມືອງ ແລະ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ




ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ເອກະຊົນ (PPP) ແມ່ນ ໜຶ່ງໃນວິທີທາງ ຂອງ ໂຄງການພັດທະນາຕົວເມືອງ ທີ່ໄດ້ຖືກຈັດຕັ້ງປະຕິບັດ ເພື່ອ ກໍ່ສ້າງ, ດຳເນີນງານ ແລະ ບຳລຸງຮັກສາ ສວນສາທາລະນະ, ໂຮງຮຽນ, ໂຮງໝໍ, ລະບົບການຂົນສົ່ງ, ລະບົບສະໜອງ ແລະ ລະບາຍນ້ຳ ຢູ່ໃນປະເທດຕ່າງໆ.

ການຈັດຕັ້ງປະຕິບັດໂຄງການ ຮ່ວມທຶນລະຫວ່າງ ພາກລັດ ແລະ ເອກະຊົນ ໃນປະເທດເຮົາ ແມ່ນ ຢູ່ພາຍໃຕ້ ຄວາມຮັບຜິດຊອບ ຂອງ ກະຊວງແຜນການ ແລະ ການລົງທຶນ ແລະ ອີງໃສ່ ດຳລັດວ່າດ້ວຍ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ. ມີຄວາມເປັນໄປໄດ້ວ່າ ໂຄງການ PPP ຈະຖືກນຳໃຊ້ເປັນໜຶ່ງ ໃນຈຳນວນ ວິທີການທີ່ມີປະສິດທິພາບ ຂອງ ການພັດທະນາຕົວເມືອງໃນອານາຄົດ.

ສອບຖາມຂໍ້ມູນເພີ່ມເຕີມ:

www.investlaos.gov.la

## ເນື້ອໃນຫຼັກ

ກອງປະຊຸມ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ ຄັ້ງທີ 2 ແມ່ນໄດ້ຈັດຕັ້ງຂຶ້ນ ໃນວັນທີ 27 ກໍລະກົດ ປີ 2022 , ທີ່ ນະຄອນຫຼວງວຽງຈັນ.

ຫົວຂໍ້ຂອງກອງປະຊຸມນີ້ແມ່ນ: ການພັດທະນາຕົວເມືອງ ແລະ ນະວັດຕະກຳດິຈິຕ໋ອນ. ມີຫຼາຍກວ່າ 40 ພາກສ່ວນໄດ້ເຂົ້າຮ່ວມກອງປະຊຸມ ແລະ ຜ່ານການແລກປ່ຽນຄຳຄິດເຫັນ ຜູ້ເຂົ້າຮ່ວມໄດ້ຢືນຢັນເຖິງທ່າແຮງ ແລະ ຄວາມເຕັມໃຈ ໃນການຈັດຕັ້ງປະຕິບັດ ວິທີການຍາດແຍ່ງເອົາການເຂົ້າຮ່ວມ ຂອງທຸກຂະແໜງການ ເພື່ອການຫັນລະບົບດິຈິຕ໋ອນ ເຂົ້າໃນການຄຸ້ມຄອງຕົວເມືອງ.



ກອງປະຊຸມ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ ຄັ້ງທີ 2

ທ່ານ ສາມາດອ່ານ ສະບັບເອເລັກໂຕຣນິກ ໄດ້ທີ່ນີ້ →

ດັດແກ້ ແລະ ຈັດພິມໂດຍ : ກອງເລຂາ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ (UMP) ump.secretariat.laos@gmail.com

UMP NEWSLETTER

# ບ້ານເຮົາ

2

**ພິມຄັ້ງທີ 2 /ເດືອນ ສິງຫາ 2022**

## 'ບ້ານເຮົາ' ແມ່ນຫຍັງ?

ບ້ານເຮົາ ແມ່ນຈົດໝາຍຂ່າວ ທີ່ສະໜອງຂໍ້ມູນກ່ຽວກັບ ການພັດທະນາຕົວເມືອງ ໃນນະຄອນຫຼວງວຽງຈັນ ແລະ ເຂດຖັດໄປ. ນອກນັ້ນ, ຈົດໝາຍຂ່າວບໍ່ພຽງແຕ່ຕີພິມຂ່າວສານ ສຳລັບຜູ້ປະກອບອາຊີບ ໃນຂະແໜງສະຖາປັດຕະຍະກຳ ແລະ ການວາງແຜນຜັງເມືອງເທົ່ານັ້ນ ແຕ່ຫາກຍັງເປັນຂໍ້ມູນຂ່າວສານສຳລັບ ຜູ້ທີ່ມີຄວາມສົນໃຈ ໃນການພັດທະນາຕົວເມືອງ ອີກດ້ວຍ.



Illustration by Knock

## ເນື້ອໃນຫຼັກ

# ການພັດທະນາ ຕົວເມືອງ ແລະ ນະວັດຕະກຳ ດິຈິຕ໋ອນ

### ການນຳໃຊ້ ເຕັກໂນໂລຊີດິຈິຕ໋ອນ ເພື່ອການພັດທະນາຕົວເມືອງ ແມ່ນມີຄວາມສຳຄັນ ຄືກັນກັບ ການພັດທະນາຊີວິດປະຈຳວັນຂອງທ່ານ

ໃນການພັດທະນາຕົວເມືອງ, ການລວບລວມຂໍ້ມູນຂ່າວສານຕ່າງໆ ຜ່ານເຄືອຂ່າຍເນັດເວີກ (Networks), ໂດຍສະເພາະເພື່ອໃຊ້ໃນການຄຸ້ມຄອງ ແລະ ສັງເກດຕຳແໜ່ງຕຶກອາຄານ, ການນຳໃຊ້ທີ່ດິນ ແລະ ສະພາບການພັດທະນາ, ສາມາດຊ່ວຍປັບປຸງສະພາບແວດລ້ອມໃນເຂດທ້ອງຖິ່ນ ແລະ ຊ່ວຍແກ້ໄຂບັນຫາຂໍ້ຫຍຸ້ງຍາກຕ່າງໆ ໂດຍການປະສານງານກັນ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ.

ນະວັດຕະກຳດິຈິຕ໋ອນ ປະກອບມີ ສາມ ໄລຍະ ຄື: ໄລຍະທີ່ 1 ແມ່ນການຫັນເປັນດິຈິຕ໋ອນ (Digitization) ເຊິ່ງເປັນການປ່ຽນຂໍ້ມູນ ໃນຮູບແບບເຈັ້ຍ ມາເປັນຂໍ້ມູນດິຈິຕ໋ອນ ໂດຍຍັງຮັກສາເນື້ອໃນຂອງຂໍ້ມູນຕ່າງໆໄວ້; ໄລຍະທີ່ 2 ການນຳໃຊ້ຂໍ້ມູນດິຈິຕ໋ອນ (Digitalization) ເພື່ອຫັນປ່ຽນຂະບວນການຕ່າງໆ ໃນການດຳເນີນທຸລະກິດ ໃຫ້ເປັນລະບົບດິຈິຕ໋ອນ; ໄລຍະສຸດທ້າຍ (Digital transformation) ແມ່ນການຫັນປ່ຽນ ຮູບແບບທຸລະກິດ, ວັດທະນະທຳຂອງການດຳເນີນການ ແລະ ອື່ນໆ ທັງໝົດ. ປະຈຸບັນ ກະຊວງໂຍທາທິການ ແລະ ຂົນສົ່ງ ກຳລັງຈັດຕັ້ງປະຕິບັດການຫັນເປັນດິຈິຕ໋ອນ (Digitalization) ໂດຍຜ່ານ ຖານຂໍ້ມູນຂ່າວສານ GIS *.

*ສູນຂໍ້ມູນຂ່າວສານ GIS ເປັນປ່ອງບໍລິການອິນເຕີເນັດ ໃນການແບ່ງປັນຂໍ້ມູນ ແຜນທີ່, ເອກະສານ ແລະ ບົດລາຍງານກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບ ການພັດທະນາຕົວເມືອງ ຊຶ່ງກຳລັງຈັດຕັ້ງປະຕິບັດໂດຍ "ໂຄງການສ້າງຂີດຄວາມສາມາດໃນການຄວບຄຸມ ແລະ ການສົ່ງເສີມ ການພັດທະນາຕົວເມືອງ (CDUDCP)" ທີ່ໄດ້ຮັບການຊ່ວຍເຫຼືອ ຈາກອົງການໄຈກາ.

## 3 ຂັ້ນຕອນນະວັດຕະກຳທາງດິຈິຕ໋ອນ ແລະ ເປົ້າໝາຍຂອງ GIS-PF




# ການພັດທະນາ ຖານຂໍ້ມູນຂ່າວສານ GIS

ເຕັກໂນໂລຊີ ຂອງ ເຄືອຂ່າຍ (ເວັບໄຊ) ແມ່ນ ມີການພັດທະນາ ແລະ ປັບປຸງຢູ່ເລື້ອຍໆ. ໝວດຄຳສັ່ງ (ແອັບພລິເຄຊັ້ນ), ອຸປະກອນເອເລັກໂຕຣນິກ ແລະ ກະທັ້ງ ແພຣດຟອມ (ກົນໄກເຊື່ອມຕໍ່) ຂອງ ການບໍລິການ ແມ່ນຖືກປ່ຽນແທນ ພາຍໃນໄລຍະ 3-5 ປີ. ໃນປະຈຸບັນ ພວກເຮົາກຳລັງພັດທະນາ ຖານຂໍ້ມູນຂ່າວສານ GIS (GIS Platform) ສຳລັບເຈົ້າໜ້າທີ່ລັດ, ພາກສ່ວນເອກະຊົນ ແລະ ພົນລະເມືອງ. ເພື່ອເຮັດໃຫ້ ປະຊາຊົນລາວທຸກຄົນ ສາມາດເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບ ຕົວເມືອງໄດ້ທຸກເວລາ ໃນອານາຄົດອັນໃກ້ນີ້.

ການປະກອບສ່ວນຈາກຊຸມຊົນ ແມ່ນກຳນົດເອົາ ເພື່ອເຮັດໃຫ້ຖານຂໍ້ມູນຂ່າວສານດັ່ງກ່າວ ສາມາດຢູ່ໄດ້ແບບຍືນຍົງ. ເຊິ່ງວຽກງານດັ່ງກ່າວນີ້ ຍັງເປັນຈຸດເລີ່ມຕົ້ນ ຂອງສິ່ງທີ່ທ້າທາຍສຳລັບພວກເຮົາ. ດັ່ງນັ້ນ, ພວກເຮົາຈຶ່ງຢາກຂໍເຊີນຊວນທ່ານ ມາຮ່ວມກິດຈະກຳນຳພວກເຮົາ ແລະ ກຽມພ້ອມ ລໍຖ້າຕິດຕາມການອັບເດດຂໍ້ມູນ.

## ‘ລັດ ດິຈິຕ໋ອນ’ ແມ່ນຫຍັງ?




ແຫຼ່ງທີ່ມາ: Digital Transformation in Lao PDR, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ , ເດືອນທັນວາ, 2021
ແປໂດຍ ກອງເລຂາ ການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ (UMP)

ໂດຍລວມ ລັດຖະບານ ດິຈິຕ໋ອນ ໝາຍເຖິງ ການໃຊ້ເຕັກໂນໂລຊີດິຈິຕ໋ອນ ໃນການບໍລິຫານຈັດການ ແລະ ຄຸ້ມຄອງ ທຸກຂະແໜງການທີ່ຂຶ້ນກັບພາກລັດ ເພື່ອເຮັດໃຫ້ວຽກງານ ມີປະສິດທິພາບ ແລະ ປະສິດທິຜົນ.

ສູນ ບໍລິຫານດິຈິຕ໋ອນ ຂອງ ລັດ, ແມ່ນຖືກຈັດຕັ້ງຂຶ້ນຢູ່ໃນ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ເຊິ່ງໄດ້ສ້າງນະໂຍບາຍ “ແຜນແມ່ບົດ ລັດດິຈິຕ໋ອນ” ເພື່ອຊຸກຍູ້ການຫັນປ່ຽນ ວຽກງານຕ່າງໆ ຢູ່ໃນປະເທດລາວ ໃຫ້ເປັນລະບົບດິຈິຕ໋ອນ . ທ່ານສາມາດເບິ່ງຮູບແບບຕົວຢ່າງໄດ້ ຕາມຮູບພາບຊ້າຍມື.

# ການພັດທະນາ ຕົວເມືອງ ແລະ ການຂົນສົ່ງ



**ການສະເໜີຄຳເຫັນ** ຈາກຂະແໜງຂົນສົ່ງໃນຕົວເມືອງ

## ການວາງນະໂຍບາຍ ການຂົນສົ່ງທີ່ມີປະສິດທິຜົນສາມາດສ້າງ ສະພາບແວດລ້ອມຕົວເມືອງໃຫ້ດີຂຶ້ນ.

ຂະແໜງຂົນສົ່ງໃນຕົວເມືອງ ສົ່ງເສີມການນຳໃຊ້ ການຂົນສົ່ງສາທາລະນະ. ຢູ່ນະຄອນຫຼວງວຽງຈັນ, ຈຳນວນພາຫະນະທີ່ຂຶ້ນທະບຽນ ໄດ້ເພີ່ມຂຶ້ນຢ່າງວ່ອງໄວຈາກ 200,000 ຄັນ ມາເປັນ 700,000 ຄັນ ໃນຊ່ວງໄລຍະ 10 ປີ. ການເພີ່ມຂຶ້ນດັ່ງກ່າວ ເຮັດໃຫ້ເກີດ ການສັນຈອນແອອັດ ຢູ່ເຂດໃນເມືອງ ໂດຍສະເພາະໃນຊ່ວງເລັ່ງດ່ວນ ໃນຕອນເຊົ້າ ແລະ ຕອນແລງ. ດັ່ງນັ້ນ, ພວກເຮົາຈຶ່ງຕັ້ງເປົ້າໝາຍທີ່ຈະເພີ່ມ ອັດສ່ວນການນຳໃຊ້ການຂົນສົ່ງສາທາລະນະ ເພື່ອຫຼຸດຜ່ອນຄວາມແອອັດ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ໂດຍການປັບປຸງຕາໜ່າງ ແລະ ການເຊື່ອມຕໍ່ກັນ ຂອງລະບົບການຂົນສົ່ງສາທາລະນະ.



ທ່ານ ລ້ຳຄ່າ ໄຊຍະສານ,
ຫົວໜ້າຂະແໜງຂົນສົ່ງ,
ພະແນກ ຍທຂ ນະຄອນຫຼວງ




ການບໍລິການລົດເມເພີ່ມຂຶ້ນ
ສອບຖາມລາຍລະອຽດເພີ່ມເຕີມໄດ້ທີ່: Vientiane City 2 Bus Service | Facebook

ໃນປະຈຸບັນນີ້, ຂະແໜງຂົນສົ່ງແມ່ນກຳລັງກະກຽມແຜນແມ່ບົດຂົນສົ່ງໃນຕົວເມືອງ ຂອງ ນະຄອນຫຼວງວຽງຈັນ ພາຍໃຕ້ “ໂຄງການສ້າງຄວາມເຂັ້ມແຂງ ລະບົບການຂົນສົ່ງ ໃນຕົວເມືອງແບບຍືນຍົງ” ຂອງ ອົງການໄຈກາ, ຢູ່ໃນແຜນແມ່ບົດນີ້ ພວກເຮົາ ໄດ້ກຳນົດ ວິໄສທັດ “ຫັນເປັນຕົວເມືອງ ທີ່ສາມາດເຂົ້າເຖິງໄດ້, ໜ້າຢູ່ ແລະ ຍືນຍົງສຳລັບ ທຸກຄົນ ພາຍໃນ ປີ 2040”. ຄຽງຄູ່ກັນນັ້ນ, ກໍ່ໄດ້ຮ່ວມເຮັດວຽກກັບ ຂະແໜງພັດທະນາຕົວເມືອງ ໃນການແກ້ໄຂບັນຫາດ້ານການຂົນສົ່ງ ແລະ ການພັດທະນາຕົວເມືອງ. ຍ້ອນວຽກງານຂົນສົ່ງແມ່ນຕິດພັນໂດຍກົງກັບ ການພັດທະນາຕົວເມືອງ. ດັ່ງນັ້ນ, ທັງສອງຂະແໜງການພວກເຮົາຈະສືບຕໍ່ເຮັດວຽກຮ່ວມກັນ ເພື່ອສ້າງນະຄອນຫຼວງວຽງຈັນ ໃຫ້ເປັນຕົວເມືອງຍືນຍົງ.

## Urban Development TIPS

In this section, you will find information about the laws and institutions on urban development, as well as urban development initiatives.

The theme of this issue is Decree on PPP.

## Decree on Public-Private Partnership (PPP)

The Government Decree on PPP (Government Approval No. 624) approved in December 2020 identifies the procedures for the implementation of PPP.

It aims to build confidence and attract private investment in public projects, protect public interests, legitimate rights and interests of private entities and the people, contribute to the protection and development of the nation in line with the green and sustainable growth strategy.




## Urban Development and PPP




For more information:

www.investlaos.gov.la

PPPs is one of the approaches of Urban Development project established to build, operate and maintain parks, schools, hospitals, transport systems, water and sewage systems in multiple countries. PPPs in our country are under the jurisdiction of the Ministry of Planning and Investment and based on the Decree on PPP, it is highly likely that PPPs will be utilized as one of the effective approaches for future urban development.

## Report

The 2nd Urban Management Platform (UMP) Meeting was held on 27 July 2022 in Vientiane Capital.

The theme is Urban development and Digital Innovation. More than 40 stakeholders participated and through an exchange of views, the participants reaffirmed the potential and willingness to implement cross-sectoral approach towards digitalization of urban management.



2nd UMP meeting

*You can read the electronic version here* →

Edited and published by Urban Management Platform Secretariat ump.secretariat.laos@gmail.com

UMP NEWSLETTER

# Ban Hao

2

The 2nd Issue / August, 2022

## What is 'Ban Hao'?

Ban Hao provides information on urban development in Vientiane and beyond. The newsletter is not only for professionals in the field of architecture and urban planning, but also for anyone who is interested in urban development.



Illustration by Knock

## Feature

# Urban Development and Digital Innovation

### Digital technology is as essential to Urban Development as it is to your everyday life.

In urban development, the aggregation of various information and data through networks, such as the management and visualization of buildings, land use and development status, are expected to improve the local environment and solve complex issues through cross-sector communication.

Digital innovation consists of three stages. First, **Digitization**, which converts analogue data into digital data without changing the existing business processes themselves. Second, **Digitalization**, which digitizes business processes across the board. Third, **Digital transformation (DX)**, which transforms the entire business model, culture, etc. MPWT is working on Digitalization through the GIS platform*.

*GIS platform is a web portal to share maps, documents and activity reports related to Urban Development that is being worked on JICA project for "Capacity Development on Urban Development Control and Promotion(CDUDCP)".

## 3 Stages of Digital Innovation and GIS-PF's targets




# GIS Platform development story

Web Technology is frequently being developed and updated. Applications, devices and even service platform are replaced within 3-5 years. We're now developing GIS Platform for Government officers, Private sectors, and Citizens. So that, in the near future, every Lao citizen will be able to access Urban-related data anytime.

Contributors' Community are formulated to sustain the platform. This is just the beginning of our challenge. Come and join us. Stay tuned for updates!

## What's 'Digital government'




Source: Digital Transformation in Lao PDR, MTC, Dec, 2021

Digital Government is generally defined as realizing an effective and efficient administration through utilizing Digital Technology in all areas of public sectors of the Government.

### Digital Government Center

is established under the Ministry of Technology and Communications, which developed policy, namely "Digital Government Master Plan". It encourages Digital transformation in Laos as illustrated in the picture on the left.



# Urban Development and Transport

**Voices** From Urban Transport field.

## Good transport policy brings Good urban environment.



Mr. Lamkha SAIGNASANE,
Director, Transport Division
Department of Public Works Transport,
Vientiane Capital

Urban transport sector promotes the use of public transport. In Vientiane, the number of registered vehicles has increased rapidly from 200,000 in 2005 to 700,000 over the past 10 years. This has resulted in traffic congestion in the city centre, especially during the morning and evening peak hours. Therefore, we aim to increase the share of public transport in order to reduce traffic congestion and environmental impact by promoting networking and coordination of public transport systems.




Bus services have recently increased!
For more information: Vientiane City 2 Bus Service | Facebook

Urban transport sector is currently preparing Vientiane Urban Transport Master Plan in JICA Project for Institutional Capacity Development for Sustainable Urban Transport System. In this Master Plan, we have set out our vision of 'Towards an accessible, livable and sustainable city for everybody in 2040' and are working together with the urban development sector to address a range of issues related to urban transport and development.
Transport is directly related to urban development and we will continue to work together in building Vientiane Capital as a sustainable city.